# ສະໝັກເພື່ອຮັບເອົາຜົນປະໂຫຍດ Fresh Bucks ໃນປີ 2022!

## ໃບສະໝັກຫວຍສາທາລະນະແມ່ນເປີດໃນວັນທີ 11 ຕຸລາ 2021.

ເລີ່ມແຕ່ວັນທີ 11 ຕຸລາ ຫາ 29 ຕຸລາ, ສະໝັກເພື່ອຮັບເອົາຜົນປະໂຫຍດ Fresh Bucks ໃນປີ 2022.



**ທຸກຄົນຕ້ອງສະໝັກຂໍເອົາຜົນປະໂຫຍດປີ 2022, ເຖິງແມ່ນວ່າຜູ້ສະໝັກຈະເປັນລູກຄ້າຂອງ Fresh Bucks ໃນປະຈຸບັນກໍຕາມ.** ຜູ້ສະໝັກສາມາດສົ່ງໃບສະໝັກທາງອອນລາຍ ຫຼື ທາງໂທລະສັບ ແລະ ລາຍລະອຽດເຫຼົ່ານີ້ຈະມີຢູ່ທີ່ SeattleFreshBucks.org ໃນວັນທີ 1 ຕຸລາ. ຂໍ້ມູນຕໍ່ໄປນີ້ແມ່ນຈໍາເປັນເພື່ອກໍານົດການມີສິດ:

**ຈໍານວນຄົນໃນຄົວເຮືອນໜຶ່ງ.**
"ຄົວເຮືອນ" ໝາຍເຖິງທຸກຄົນທີ່ຢູ່ກັບຜູ້ສະໝັກ ແລະ ມີສ່ວນຮ່ວມໃນຄ່າໃຊ້ຈ່າຍ. ຖ້າຂະໜາດຄົວເຮືອນຂອງຜູ້ສະໝັກມີການປ່ຽນແປງເລື້ອຍໆ, ກະລຸນາຊີ້ບອກຂະໜາດຄົວເຮືອນທີ່ຄົງທີ່ທີ່ສຸດ.

**ລາຍຮັບຄົວເຮືອນທັງໝົດ, ກ່ອນຈ່າຍອາກອນ, ໃນຊ່ວງ 12 ເດືອນຜ່ານມາ.**

**ທີ່ຢູ່ເຮືອນປັດຈຸບັນ.** ຂໍ້ມູນນີ້ຕ້ອງໄດ້ຖືກປ້ອນເຂົ້າໄປຢ່າງຖືກຕ້ອງ ຫຼື ມັນອາດຈະກະທົບກັບການສົ່ງຄໍາຮ້ອງສະໝັກ. ຖ້າຜູ້ສະໝັກບໍ່ມີທີ່ຢູ່ເຮືອນ, ກະລຸນາໃສ່ທີ່ຢູ່ທາງໄປສະນີ.

ຄໍາຮ້ອງສະໝັກທັງໝົດທີ່ມີສິດ ແລະ ທີ່ບໍ່ຊໍ້າກັນ ທີ່ໄດ້ຮັບພາຍໃນໄລຍະເວລາຄໍາຮ້ອງສະໝັກຫວຍສາທາລະນະຈະຖືກປ້ອນເຂົ້າໄປໃນຫວຍສາທາລະນະ. ໂອກາດຂອງຜູ້ສະໝັກໃນການຖືກເລືອກໃນການອອກຫວຍແມ່ນຄືກັນ, ບໍ່ວ່າເຂົາເຈົ້າຈະສະໝັກຜ່ານທາງອອນລາຍ ຫຼື ຜ່ານທາງໂທລະສັບກໍຕາມ.

Fresh Bucks ຮ່ວມມືກັບອົງການຈັດຕັ້ງຊຸມຊົນທ້ອງຖິ່ນ ແລະ ສຸກສາລາເພື່ອລົງທະບຽນຜູ້ທີ່ມີສິດໄດ້ຮັບຜົນປະໂຫຍດ Fresh Bucks. ຖ້າຜູ້ສະໝັກໄດ້ສົ່ງໃບສະໝັກກັບອົງການຈັດຕັ້ງຄູ່ຮ່ວມງານ, ເຂົາເຈົ້າບໍ່ຈໍາເປັນຕ້ອງສົ່ງຄໍາຮ້ອງສະໝັກຫວຍສາທາລະນະ (Public Lottery).

ຄໍາຖາມ? ເຂົ້າເບິ່ງ SeattleFreshBucks.org ຫຼື ໂທຫາ 206-684-2489.

Fresh Bucks

Seattle
Office of Sustainability
& Environment

Fresh Bucks ແມ່ນໄດ້ຮັບທຶນຈາກອາກອນເຄື່ອງດື່ມນໍ້າຫວານຂອງເມືອງ Seattle (City of Seattle's Sweetened Beverage Tax) ແລະ ບໍລິຫານໂດຍສໍານັກງານເພື່ອຄວາມຍືນຍົງ ແລະ ສິ່ງແວດລ້ອມຂອງເມືອງ Seattle (Seattle Office of Sustainability & Environment).

Lao